# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 05 ຕຸລາ 2008 (10-05-2008)

## ທຸກຄົນຕົກຢູ່ໃນຄວາມຜິດບາບ:

**ຂໍ້ພຣະຄັມພີໃນບົດຮຽນ:** (ໂຣມ 1:18-25, 28-32; 3:9-10)
**ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:** ບົດຮຽນນີ້ໄດ້ເວົ້າກ່ຽວກັບການສອນຂອງທ່ານໂປໂລວ່າ ມະນຸດເຮົາຕົກຢູ່ໃນຄວາມຜິດບາບໂດຍກຳເນີດ, ຄວາມບາບໄດ້ຊັກຈູງແນວຄວາມຄິດ, ນິສັຍ, ການຕັດສິນໃຈ, ແລະການກະທຳຂອງຄົນທີ່ປະຕິເສດ ການນັບຖືພຣະເຈົ້າຢ່າງຖືກຕ້ອງ, ແລະໃຫ້ການສນັບສນູນອູ້ມຊູກັບກຸ່ມຄົນທີ່ປະພຶດຜິດສິນທັມ.

**ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:** ທຸກ ໆ ຄົນເປັນຄົນຜິດບາບ, ແຕ່ມີກຸ່ມຄົນຈຳນວນນຶ່ງອາດມີຄວາມຮູ້ສຶກວ່າ: ພວກເຂົາມີຄວາມຄິດເຫັນສ່ວນຕົວໃນການປະຕິບັດຕໍ່ພຣະເຈົ້າ, ຫາກຄິດໃນທຳນອງນີ້ເຂົາວ່າຖືກຕ້ອງແລ້ວ, ມີຜູ້ເຖົ້າຜູ້ແກ່ຈຳນວນນຶ່ງກໍຄິດໃນທຳນອງນີ້: ຖ້າຫາກວ່າຄົນເຮົານັບຖືສາສນາຢ່າງຖືກຕ້ອງ, ຫລືບໍ່ກໍເປັນຄົນດີ, ເປັນຄົນທີ່ຈິງໃຈ ຕົງໄປຕົງມາແລ້ວ ພວກເຂົາກໍເຫັນວ່າຖືກຕ້ອງສຳລັບພຣະເຈົ້າແລ້ວ. ບົດຮຽນນີ້ໄດ້ເວົ້າທາງກົງກັນຂ້າມ, ເປັນຕົ້ນແນວຄວາມຄິດປັດຈຸບັນ ແລະຄວາມຄິດການໄວ້ວາງໃຈໃນພຣະທັມຄຳສອນໃນພຣະຄັມພີວ່າ: ມະນຸດທຸກຄົນຕົກຢູ່ໃນຄວາມບາບ. ບໍ່ວ່າຜູ້ໃດຈະເປັນຄົນຊົ່ວ ຫລືຄົນດີພວກເຂົາກໍເປັນຄົນຜິດບາບທັງນັ້ນ.

**ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ?:** ບົດຮຽນນີ້ຈະຊ່ອຍທ່ານໃຫ້ຄົ້ນພົບວ່າ ທຸກຄົນບໍ່ເປັນຄົນຊອບທັມມາແຕ່ກຳເນີດ ແລະນັບຖືພຣະເຈົ້າຢ່າງແທ້ຈິງ. ທັງຈະຊ່ອຍທ່ານໃຫ້ເຫັນຈຸດຢືນຂອງມະນຸດເຮົາວ່າອັນໃດຖືກຕ້ອງ ແລະອັນໃດຜິດ, ພ້ອມທັງຈະຊ່ອຍທ່ານໃຈເຂົ້າໃຈວ່າເປັນຫຍັງບາງຄົນຈຶ່ງມີຄວາມສຸກໃຈໃນການທຳຊົ່ວ ແລະກໍສນັບສນູນຊຶ່ງກັນ ແລະກັນ.

## ການຈັດຕຽມຂອງຄຣູ:

1. ອະທິຖານຂໍການຊີ້ນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີ ແລະບົດຮຽນ.
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ.
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ.
4. ອ່ານ **"ແຜນການສອນ",** ໝາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບ ຫລືຕົວຢ່າງກໍຈົດບັນທຶກໄວ້.

## ແຜນການສອນ:

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ.
2. ສຳຫລວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດ ເພື່ອຈະໄດ້ສົ່ງຂ່າວຫາ ແລະອະທິຖານເພື່ອ.
3. ຖາມນັກຮຽນວ່າ ເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນອາທິດທີ່ຜ່ານມາ ເພື່ອທົບທວນຄວາມຊົງຈຳ.
4. ໃຫ້ນັກຮຽນຄົນນຶ່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ. ຄຳພຍານ.
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນ ແລະຜູ້ຂາດຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ.

**ແນະນຳ**: ເອົາເຂັມຊີ້ທິດມາ, ແລ້ວສເນີໃຫ້ຜູ້ນຶ່ງອະທິບາຍວ່າມັນທຳງານຢ່າງໃດ. ຖ້າພວກເຮົາຕິດຕາມເຂັມຊີ້ທິດ, ພວກເຮົາຈະໄປຖືກທິດທາງທີ່ເຮົາຈະໄປນັ້ນ. ຖ້າເອົາເຫລັກກ້າ (ແມ່ເຫລັກດູດ) ມາໃກ້ໜ້າເຂັມຊີ້ທິດ ແລະບັລຍາຍເຖິງຜົນຂອງມັນ. ຖ້າເອົາເຫລັກດູດມາໃກ້ເຂັມຊີ້ທິດຫລາຍພວກເຮົາກໍຈະຕາມເຂັມຊີ້ທິດໄປໃນທາງທີ່ຜິດ.

- ພວກເຮົາສາມາດຄົ້ນພົບຈາກ 5 ບົດຮຽນເຫລົ່ານີ້ບໍ່ພຽງແຕ່ຕ້ອງເຊື່ອເທົ່ານັ້ນທີ່ເປັນການຖືກຕ້ອງວ່າມີຄວາມສຳພັນກັບພຣະເຈົ້າ, ແຕ່ປະກອບດ້ວຍການກະທຳແລະໃນການເຊື່ອໄວ້ວາງໃຈໃນພຣະອົງໄປພ້ອມ ໆກັນ.

1. **ຜູ້ຕໍ່ສູ້ກັບຄວາມຈິງຂອງພຣະເຈົ້າ:** (ໂຣມ 1:18-20)

- ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ໂຣມ 1:18-20
- ສ້າງຄວາມຄິດຄວາມເຫັນກັບນັກຮຽນ ເຣື່ອງຄົນທີ່ເມີນເສີຍຕໍ່ກົດໝາຍ (ເຊັ່ນ ຄວາມໄວຈຳກັດ, Speed limits). ຖາມວ່າ: ແມ່ນຫຍັງຈະເກີດຂຶ້ນໃນເມື່ອຜູ້ໃດຜູ້ນຶ່ງໄດ້ຝ່າຝືນ ເມີນເສີຍຕໍ່ສິ່ງເຫລົ່ານີ້? ຖ້າພວກເຮົາທຳຜິດພາດຂັບຣົດໄວເກີນຄວາມໄວ, Over speed limits, ພວກເຮົາກໍຈະໄດ້ໃບປັບໃໝ ທາງກົດໝາຍກໍຈະບໍ່ມີທາງທີ່ຈະຍົກໂທດໃຫ້ໄດ້ຈົນກວ່າໄດ້ຈ່າຍ.
- ມະນຸດພວກເຮົາບໍ່ມີຂໍ້ແກ້ຕົວສຳລັບການເມີນເສີຍ ຫລື ການປະຕິເສດສິ່ງທີ່ພຣະເຈົ້າໄດ້ກຳນົດເອົາໄວ້.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ໂຣມ 1:18-20)

1. ໃນເມື່ອຄົນໃດຄົນນຶ່ງເວົ້າເຖິງຄວາມໂກດຂອງພຣະເຈົ້າແລ້ວມີຫຍັງເຂົ້າມາໃນຄວາມຄິດ?
2. ແມ່ນຫຍັງທີ່ເຮັດໃຫ້ຫລາຍຄົນປະຕິເສດຄວາມໂກດຮ້າຍຂອງພຣະເຈົ້າໃນສມັຍນີ້?
3. ເປັນດ້ວຍເຫດໃດໂປໂລຈຶ່ງເວົ້າວ່າ: ບໍ່ມີຄົນໃດທີ່ແກ້ຕົວໄດ້ສຳລັບການປະຕິເສດພຣະເຈົ້າ?
4. ພຣະເຈົ້າໄດ້ເປີດເຜີຍພຣະອົງເອງໃນພຣະເຢຊູ ມີທາງໃດອີກແດ່ທີ່ພຣະເຈົ້າໄດ້ຊົງເປີດເຜີຍພຣະອົງເອງ?

2. **ເຂົາຫັນໄປຫາພຣະເຈົ້າຂອງເຂົາເອງ:** (ໂຣມ 1:21-25)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 1:21-25
- ຄວາມແຕກຕ່າງຂອງຄຳວ່າ "ພຣະເຈົ້າປອມ" (a god) ແລະ "ພຣະເຈົ້າ" (the God).ຊຶ່ງສະແດງໃຫ້ເຫັນວ່າມີບາງຄົນໄດ້ເຊື່ອຫລາຍ **ພຣະເຈົ້າ** ທ່ານໂປໂລເວົ້າວ່າ: ການເຊື່ອຖືບາງສິ່ງບາງຢ່າງເປັນພຣະເຈົ້າຊຶ່ງບໍ່ແມ່ນພຣະເຈົ້າອົງທ່ຽງແທ້ອົງຊົງດຳຣົງຢູ່ນັ້ນ, ທ່ານໂປໂລໄດ້ບອກໄວ້ຢ່າງຊັດເຈນວ່າທາງໃດຜິດ ທາງໃດຖືກທີ່ພວກເຮົາຕ້ອງຕອບສນອງຕໍ່ພຣະເຈົ້າ.
- ໃຫ້ນັກຮຽນຊີ້ແຈງເຖິງຫົນທາງທີ່ຄົນທັງຫລາຍຫັນໜີຈາກການນະມັສການພຣະເຈົ້າ ແລະໄປນະມັສການຮູບໂຄຣົບ. ໃຫ້ສົນທະນາກັນວ່າມີຮູບໂຄຣົບອັນໃດ ປະເພດໃດແດ່ທີ່ເຂົາເອົາມານະມັສການໃນທຸກມື້ນີ້ ແລະເພາະດ້ວຍເຫດໃດ. ເປັນຫຍັງຈຶ່ງວ່າການນະມັສການຮູບໂຄຣົບງ່າຍກວ່ານະມັສການພຣະເຈົ້າ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ໂຣມ 1:21-25

1. ທ່ານຈະແນ່ໃຈໄດ້ແນວໃດວ່າສິ່ງໃດທີ່ເປັນການບູຊາຮູບໂຄຣົບ?
2. ຄຣິສຕຽນສົມຄວນຈະເຂົ້າຮ່ວມໃນສັງຄົມ ແລະຖືວ່າການກະທຳຂອງເຂົາມີຄຸນຄ່າບໍ່?
3. ຄວາມບາບຂອງການຂາບໄຫວ້ບູຊາຮູບໂຄຣົບຈະເປັນແນວໃດ?
4. ເປັນດ້ວຍເຫດໃດຄຣິສຕຽນຫລາຍຄົນກ່າວໂທດຜູ້ທີ່ຂ້າຄົນ, ແຕ່ໄດ້ເມີນເສີຍ ຫລືຍົນດີນຳຄວາມຜິດບາບທາງເພດສັມພັນ.
5. ເປັນເພາະເຫດໃດຄົນອະເມຣິກາຫລາຍຄົນຈຶ່ງຕົກຢູ່ໃນບ້ວງແຮ້ວຂອງເພດສັມພັນໃນເພດດຽວກັນ. ເຣື່ອງນີ້ທ່ານໂປໂລໄດ້ກ່າວໄວ້ວ່າແນວໃດ?

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານພຣະທັມ ໂຣມ 1:28-32
- ຮາກເຫງົ້າປັນຫາຂອງມະນຸດສ່ວນຫລາຍຈະຈະເຣີນຂຶ້ນໃນທາງປະຕິເສດພຣະເຈົ້າ.
- ພວກເຮົາຈະສາມາດຊ່ອຍໃຫ້ເຂົາເຂົ້າໃຈຜົນກັມຂອງການປະຕິເສດພຣະເຈົ້າໄດ້ຢ່າງໃດ?
- ໃນເມື່ອມີຜູ້ນຶ່ງຜູ້ໃດຫາກເອົາຊີວິດອອກຈາກພຣະເຈົ້າໄປແລ້ວເຂົາຈະເອົາຫຍັງເຂົ້າມາແທນ?

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u> ໂຣມ 1:28-32

1. ທ່ານຈະປຽບທຽບຊັ່ງຊາພຣະຄັມພີໃສ່ກັບເຂັມຊີ້ທິດແນວໃດ?
2. ທ່ານຈະປຽບທຽບຊັ່ງຊາຄໍາວ່າ "ຕົວະໜ້ອຍດຽວ" ກັບຜົນກະທົບຂອງເຫລັກດູດທີ່ຢອງຢູ່ໜ້າເຂັມຊີ້ທິດ?

4. <u>ຜູ້ທີ່ຖືສາສນາກໍເປັນຄົນຫລົງຫາຍເໝືອນກັນ:</u> (ໂຣມ 3:9-10)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານນພຣະທັມ ໂຣມ 3:9-10
- ພຣະທັມເຫລົ່ານີ້ຄືກັບວ່າທ່ານໂປໂລໄດ້ຮ້າຍປະຊາຊົນ? ເປັນເພາະເຫດໃດ ຫລືບໍ່ເປັນຫຍັງ? ທ່ານໂປໂລໄດ້ຊີ້ແຈງໃຫ້ເຫັນຂ່າວປະເສີດອັນແທ້ຈິງ. ນອກຈາກພຣະເຢຊູແລ້ວບໍ່ມີໃຜດີພໍທີ່ຈະເປັນຜູ້ທີ່ພຣະເຈົ້າຊົງຮັບເຂົ້າໄປໃນສວັນໄດ້. ປາສຈາກພຣະເຈົ້າ ແລະພຣະຄຸນຂອງພຣະອົງແລ້ວຈະບໍ່ພົ້ນຈາກຄວາມຜິດບາບໄດ້. ໃຜກໍຕາມ, ທີ່ວ່າເປັນຄົນດີທີ່ສຸດ, ເປັນຄົນຢູ່ໃນສິນກົນໃນທັມບໍ່ເຄີຍກະທໍາຄວາມຊົ່ວ ຫລືຜູ້ທີ່ເອີ້ນຕົນວ່າເປັນຄຣິສຕຽນຈະບໍ່ດີລື່ນຜູ້ທີ່ຫລົງຫາຍໃນຄວາມຜິດບາບໄດ້.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:</u>

1. ຄວາມແຕກຕ່າງລະຫວ່າງຄວາມເຊື່ອ ກັບ ສາສນາ?
2. ຜູ້ທີ່ຖືສາສນາກໍມີທາງທີ່ຈະຫລົງຫາຍຢູ່ບໍ່? ຫລົງຫາຍໄດ້ແນວໃດ?
3. ທ່ານເຄີຍໄດ້ສົນໃຈໃນຄວາມເວົ້າແຮງຂອງທ່ານໂປໂລທີ່ສະແດງອອກເຖິງເຣື່ອງທີ່ວ່າບໍ່ມີໃຜຈັກຄົນທີ່ເປັນຄົນຊອບທັມຕໍ່ພຣະພັກພຣະເຈົ້ານັ້ນບໍ່?
4. ທ່ານເຄີຍໄດ້ບອກໃຜບໍ່ວ່າມະນຸດເຮົາບໍ່ມີໃຜເປັນຄົນຊອບທັມພໍຕໍ່ພຣະພັກພຣະເຈົ້າ? ຄໍາຕອບອອກມາເປັນແນວໃດ?

## <u>ບົດຮຽນແຫ່ງຄວາມຈິງໃນພຣະຄັມພີ:</u>

- ພຣະເຈົ້າຮູ້ຈັກທຸກ ໆ ຄົນ ກໍເນື່ອງຈາກວ່າພຣະອົງຊົງເປັນຜູ້ສ້າງທຸກ ໆ ຄົນ ໂດຍພຣະອົງເອງ, ມະນຸດຍັງບໍ່ເຂົ້າໃຈການທໍາລາຍຢ່າງເຕັມປ່ຽມບໍ່ໄດ້.
- ຄົນສ່ວນຫລາຍໃນຍຸກສຸດທ້າຍນີ້ໄດ້ຫັນໄປຫາພະທີ່ເຂົາສ້າງຂຶ້ນມາເອງ .ນັ້ນແຫລະມະນຸດທຸກຄົນເປັນຄົນຜິດບາບ, ເຂົາບໍ່ພຽງແຕ່ຄິດ ແລະຝຶກຝົນການກະທໍາຊົ່ວດ້ວຍຕົວເຂົາເອງພ້ອມທັງສນັບສນູນມຫ້ຄົນອື່ນກະທໍາຄວາມຜິດບາບອີກດ້ວຍ.
- ນອກຈາກພຣະເຈົ້າ ແລະພຣະຄຸນແຫ່ງຄວາມລອດພົ້ນຂອງພຣະອົງແລ້ວ, ຜູ້ໃດທີ່ຖືວ່າຕົນເອງເປັນຄົນດີ ຫລືເປັນຜູ້ຄົນຢູ່ໃນສິນກົນໃນທັມກໍຕາມເຂົາກໍຈະບໍ່ດີໄປກວ່າຄົນຜິດບາບທັງຫລາຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org. by JH